State of California—Health and Human Services Agency
California Department of Public Health

**MARK B HORTON, MD, MSPH**
*Director*

**ARNOLD SCHWARZENEGGER**
*Governor*

# ການປ້ອງກັນຕົວທ່ານເອງກັບລູກອ່ອນຂອງທ່ານ

ຫາກທ່ານຖືພາຢູ່ຫລືຄິດວ່າອາດເປັນໄດ້ທີ່ທ່ານຕັ້ງທ້ອງແລ້ວ ທ່ານຕ້ອງຮຽນຮູ້ກ່ຽວກັບເຊື້ອ HIV ຄືເຊື້ອໄວຣັສທີ່ກໍ່ໃຫ້ເກີດພະຍາດເອັດສ໌.

ເວລາທີ່ຖືພານັບເປັນຊ່ວງເວລາທີ່ທ່ານຄວນເບິ່ງແຍງຕົວເອງໃຫ້ດີແລະຄວນເຂົ້າໄປກວດຮ່າງກາຍຢ່າງສະຫມ່ຳສະເຫມີເພື່ອສຸກຂະພາບຂອງຕົວທ່ານເອງແລະສຸກຂະພາບຂອງລູກອ່ອນຂອງທ່ານ. ຜູ້ຮັກສາສຸກຂະພາບຂອງທ່ານຈະຖາມແລະກວດຄົ້ນເຖິງອາການສຸກຂະພາບຂອງທ່ານ ເພື່ອໃຫ້ສຸກຂະພາບຂອງທ່ານແລະລູກອ່ອນຂອງທ່ານຈະແຂງແຮງເທົ່າທີ່ເປັນໄປໄດ້. ຈະມີການກວດຄົ້ນເຊື້ອ HIV ໃນຕົວທ່ານເປັນສ່ວນນຶ່ງຂອງກິດຈະວັດກວດຮັກສາລະຫວ່າງການຖືພາ ຫລືເມື່ອຕອນທ່ານປວດທ້ອງໃກ້ຈະຄອດ ເວັ້ນໄວ້ແຕ່ທ່ານບໍ່ຍອມໃຫ້ກວດ. ການກວດຄົ້ນເຊື້ອ HIV ລະຫວ່າງການຖືພານັບເປັນທາງເລືອກທີ່ດີທີ່ສຸດສຳລັບແມ່ກັບລູກ.

### ເຊື້ອ HIV ແມ່ນຫຍັງ?

ເຊື້ອ HIV (Human Immunodeficiency Virus) ກໍ່ໃຫ້ເກີດພະຍາດຊະນິດນຶ່ງທີ່ເຮັດໃຫ້ລະບົບຕ້ານທານພະຍາດອ່ອນແອລົງ ຊຶ່ງຈະເຮັດໃຫ້ຮ່າງກາຍຕ້ານທານການຕິດເຊື້ອຕ່າງໆ ໄດ້ຍາກ.

### ເຊື້ອ HIV ຕິດແປດກັນຢ່າງໃດ?

ເຊື້ອ HIV ແຜ່ຕິດສ່ວນຫລາຍໂດຍການມີເພດສຳພັນຢ່າງບໍ່ປ້ອງກັນຕົວ ຫລືໂດຍການໃຊ້ເຂັມສັກຢາຮ່ວມກັນກັບຜູ້ທີ່ມີເຊື້ອ HIV ຢູ່ແລ້ວ. ຜູ້ຍິງໃນສະຫະລັດສ່ວນຫລາຍຕິດເຊື້ອ HIV ໂດຍການຮ່ວມເພດກັບຜູ້ຊາຍ.

ຜູ້ຍິງທີ່ຖືພາຜູ້ຊຶ່ງຕິດເຊື້ອ HIV ຫລືພະຍາດເອັດສ໌ຢູ່ແລ້ວ ສາມາດເຮັດໃຫ້ລູກອ່ອນຕິດເຊື້ອ HIV ໄດ້ໃນລະຫວ່າງການຖືພາ ການຄອດລູກ ແລະການປ້ອນນ້ຳນົມໃຫ້ລູກກິນ.

### ການກວດຄົ້ນເຊື້ອ HIV ຈະຊ່ວຍລູກຂອງຂ້າພະເຈົ້າຢ່າງໃດ?

ການກວດຄົ້ນເຊື້ອ HIV ຈະຊ່ວຍທ່ານແລະລູກອ່ອນຂອງທ່ານໃນກໍລະນີທີ່ທ່ານມີເຊື້ອ HIV ໂດຍເຕືອນໃຫ້ທ່ານຮູ້ເຖິງຄວາມຈຳເປັນທີ່ຈະຮັບການປິ່ນປົວ. ການປິ່ນປົວລະຫວ່າງການຖືພາ ການປວດທ້ອງຄອດ ແລະການຄອດລູກ ສາມາດຊ່ວຍໃຫ້ຄວາມສ່ຽງທີ່ຈະຖ່າຍທອດເຊື້ອ HIV ເຖິງລູກອ່ອນຂອງທ່ານລົດນ້ອຍລົງໄດ້.

ທາງການແພດມາຮຽນຮູ້ວ່າ ຫາກທ່ານຕິດເຊື້ອ HIV ຢູ່ແລ້ວ ການປິ່ນປົວດ້ວຍຢາທີ່ເຫມາະສົມສາມາດລົດຄວາມສ່ຽງທີ່ທ່ານຈະເຮັດໃຫ້ລູກຂອງທ່ານຕິດເຊື້ອ HIV ໃຫ້ນ້ອຍລົງໄດ້ຢ່າງຍິ່ງ.

### ຈະເປັນຢ່າງໃດຖ້າຫາກຂ້າພະເຈົ້າມີເຊື້ອ HIV?

ຫາກທ່ານມີເຊື້ອ HIV ທ່ານຕ້ອງການຈະໄປປຶກສາກັບທ່ານຫມໍຂອງທ່ານເລື້ອງທີ່ວ່າການປິ່ນປົວມີທາງເລືອກອັນໃດແດ່. ທ່ານຫມໍຫນ້າຈະແນະນຳທ່ານກ່ຽວກັບຢາທີ່ຖືວ່າປອດໄພໃຊ້ລະຫວ່າງການຖືພາ. ທ່ານອາດຈະໄດ້ຮັບການສະຫນັບສະຫນູນໃຫ້ໃຊ້ຢາຕໍ່ໄປຫລັງຈາກຄອດລູກແລ້ວຢ່າງຕໍ່ເນື່ອງເພື່ອສຸກຂະພາບຂອງທ່ານເອງ ຊຶ່ງຈະແລ້ວແຕ່ປັດໄຈຕ່າງໆ.

### ທ່ານສາມາດປ້ອງກັນຕົວເອງຈາກການຕິດເຊື້ອ HIV ໂດຍ:

- ໃຊ້ຖົງຢາງອະນາໄມ (ສຳລັບຍິງຫລືຊາຍ) ທີ່ປະກອບດ້ວຍ ເລ່ແທັກ (latex) ຫລື ໂພລີຢູຣະເຕນ (polyurethane) ເມື່ອທ່ານຮ່ວມເພດເຖິງແມ່ນວ່າທ່ານຖືພາຢູ່ກໍຕາມ. ໃຫ້ໃຊ້ຂອງມື່ນທີ່ປະກອບດ້ວຍທາດນ້ຳ (water-based lubricant) ເທົ່ານັ້ນ. ສ່ວນຂອງມື່ນທີ່ປະກອບດ້ວຍນ້ຳມັນ ຈະເຮັດໃຫ້ຖົງຢາງອະນາໄມອ່ອນລົງແລະຈະເຮັດໃຫ້ການໃຊ້ໄດ້ຜົນລົດນ້ອຍລົງ.
- ບໍ່ໃຊ້ເຂັມສັກຢາຮ່ວມກັນເພື່ອສັກຢາທົ່ວໄປ, ສັກຢາສະເຕຣອຍດ໌ (steroid), ສັກໄວຕາມິນ, ສັກລາຍ, ຫລືເພື່ອເຈາະຮູຕາມຜິວຫນັງ.

### ຄວາມຊ່ວຍເຫລືອທາງອື່ນໆ:

ໃຫ້ໂທຣ໌ໄປຕາມສາຍດ່ວນເລື້ອງ HIV ກັບພະຍາດເອັດສ໌ ຂອງລັດຄາລິຟໍເນັຽ (California) ທີ່ **1-800-367-2437** ເພື່ອຈະໄດ້ຮັບຄວາມຊ່ວຍເຫລືອດ້ານການສົ່ງຕໍ່ແລະການປຶກສາເລື້ອງ HIV ຮ່ວມທັງຜູ້ຊ່ຽວຊານໃນການປິ່ນປົວ HIV ລະຫວ່າງການຖືພາ ຊຶ່ງຢູ່ໃກ້ຄຽງກັບພື້ນທີ່ຂອງທ່ານ.